# ບົດຮຽນໂຮງຮຽນວັນອາທິດ
# ວັນອາທິດ ທີ 20 ມີນາ 2004 ( 3-20-2004)

---

## ພຣະເຢຊູ: ຊົງເປັນເຄື່ອງຖວາຍບູຊາ

ຂໍ້ພຣະຄັມພີໃນບົດຮຽນ: ໂຢຮັນ 19:28-37, ເຮັບເຣີ 9:22-26

ພຣະຄັມພີແຫ່ງຄວາມຈິງ: ການສິ້ນພຣະຊົນຂອງພຣະເຢຊູຢູ່ເທິງໄມ້ກາງແຂນເປັນເຄື່ອງຖວາຍບູຊາສິ່ງດຽວເທົ່ານັ້ນທີ່ອົງພຣະຜູ້ເປັນເຈົ້າຊົງຮັບ.

ຜົນສະທ້ອນຕໍ່ຊີວິດ: ບົດຮຽນນີ້ຈະຊ່ອຍທ່ານໃຫ້ຮູ້ເຖິງບຸນຄຸນຂອງການສິ້ນພຣະຊົນຂອງພຣະເຢຊູທີ່ໄມ້ກາງແຂນ.

### ເປັນຫຍັງພຣະເຢຊູຈຶ່ງຕ້ອງເປັນເຄື່ອງຖວາຍບູຊາໃຫ້ກັບຄວາມບາບຂອງຂ້າພະເຈົ້າ?

ໃນຂນະທີ່ຂ້າພະເຈົ້າເປັນນັກຮຽນພາສາທີ່ ຊັນ ໂຮເຊ, ໂຄສຕາ ຣິກາ (San Jose, Costa Rica), ຂ້າພະເຈົ້າເປັນພຍານໄດ້ວ່າ ກ່ອນອາທິດຂອງເທສການວັນຄືນພຣະຊົນຂອງອົງພຣະເຢຊູ ມີຫມູ່ຂະບວນແຫ່ໄປຕາມຖນົນ. ຢູ່ທາງຫນ້າຂອງຂະບວນນັ້ນ ມີຊາຍຫນຸ່ມຄົນນຶ່ງແບກໄມ້ກາງແຂນນຳຫນ້າໄປ ເບິ່ງເຫມືອນກັບວ່າລາວເປັນຄົນປ່ວຍໂຊບໍ່ມີແຮງ. ຂ້າພະເຈົ້າເລີຍຖາມເຈົ້າຂອງບ້ານທີ່ຂ້າພະເຈົ້າເຊົ່າຢູ່ນັ້ນກ່ຽວກັບຊາຍຫນຸ່ມຄົນນັ້ນ. ເຈົ້າຂອງບ້ານໄດ້ອະທິບາຍໃຫ້ຂ້າພະເຈົ້າຟັງວ່າ ຊາຍຫນຸ່ມຄົນນັ້ນປ່ວຍໂຊຫລາຍແລະປະຊາຊົນເຊື່ອກັນວ່າຖ້າລາວແບກໄມ້ກາງແຂນແລ້ວ ລາວກໍຈະໄດ້ຮັບການປິ່ນປົວ.

ໃນປະເທດຟີລິປິນ (Philippines) ມີຜູ້ທີ່ຖວາຍຕົນໃຫ້ຕອກຄຶງໄວ້ເທິງໄມ້ກາງແຂນ. ໃນຣັດ ນິວ ແມັກຊີໂກ (New Mexico) ຈະມີຝູງຊົນຈຳນວນຫລວງຫລາຍເດີນທາງໄປນະມັສການຢູ່ບ້ານນ້ອຍໆຊື່ວ່າ ຊິມາໂຢ (Chimayo) ຢູ່ທາງທິດເຫນືອຂອງ ແຊນຕາ ເຟ (Santa Fe) ແລະທິດຕາເວັນຕົກພາກໃຕ້ຂອງ ທາວ (Taos). ທ່ານຄິດວ່າການເສັຽສລະໃຫ້ເປັນເຄື່ອງບູຊາຢ່າງນີ້ເປັນທີ່ພໍພຣະທັຍຂອງພຣະເຈົ້າບໍ່? ແມ່ນຫຍັງຄືເຄື່ອງບູຊາທີ່ພຽງພໍເພື່ອຮັກສາຈິດວິນຍານຂອງພວກເຮົາ? ບົດຮຽນນີ້ຈະຊ່ອຍທ່ານໃຫ້ເຂົ້າໃຈການວາຍພຣະຊົນຂອງພຣະເຢຊູຢູ່ເທິງໄມ້ກາງແຂນ ຄືເຄື່ອງບູຊາອັນດຽວເທົ່ານັ້ນທີ່ຈຳເປັນເພື່ອການອະພັຍບາບ.

### ສຶກສາພຣະຄັມພີ

1. ພຣະເຢຊູຊົງກະທຳພາຣະກິດອັນສົມບູນຂອງພຣະອົງ (ໂຢຮັນ 19:28-30)

ພຣະເຢຊູສະເດັດເຂົ້າມາໃນໂລກ ເພື່ອມາທຳພາຣະກິດຊຶ່ງພຣະເຈົ້າໄດ້ມອບຫມາຍໃຫ້. ພາຣະກິດນັ້ນຄືມາໂຜດພວກເຮົາໃຫ້ພົ້ນຈາກຄວາມບາບຂອງພວກເຮົາ (ໃຫ້ເບິ່ງພຣະທັມ ມັດທາຍ 1:21). ພຣະອົງສະເດັດເຂົ້າມາເພື່ອພວກເຮົາຈະມີຄວາມຫວັງໃນສະພາບການທີ່ຂາດຄວາມຫວັງຍ້ອນຄວາມບາບ.

ຄວາມບາບຂອງພວກເຮົານຳຄວາມຕາຍມາສູ່ພວກເຮົາ (ໃຫ້ເບິ່ງພຣະທັມ ໂຣມ 6:23). ສະນັ້ນ ພຣະເຢຊູ "ພຣະອົງໄດ້ຊົງຮັບແບກບາບຂອງພວກເຮົາ" ແລະໄດ້ຊົງສິ້ນພຣະຊົນ (1 ເປໂຕ 2:24). ທີ່ໄມ້ກາງແຂນ ພຣະອົງຮູ້ວ່າພາຣະກິດຂອງພຣະອົງໄດ້ ສຳເຣັດແລ້ວ. ພຣະຄັມພີໄດ້ກ່າວເຖິງເຫດການຕອນນີ້ (ໃຫ້ເບິ່ງພຣະທັມ ເພງສັຣເສີນ 22:14-18; 69:21). ພຣະອົງຊົງໃຊ້ຫນີ້ຂອງຄວາມບາບຂອງພວກເຮົາຈົນຫມົດສິ້ນ.

ເມື່ອພຣະອົງຖືກຂ້ຽນຕີ, ເສັຽເລືອດບໍ່ແມ່ນໜ້ອຍ, ຍັງແບກທ່ອນໄມ້ໃຫຍ່ຂຶ້ນໄປເທິງເນີນພູ ບ່ອນທີ່ພວກເຂົາຄຶງຄົນໂທດໄວ້ທີ່ໄມ້ກາງແຂນ ບໍ່ເປັນການປລາດໃຈເລີຍດອກວ່າພຣະອົງຊົງກ່າວວ່າ "ເຮົາຢາກນ້ຳ!" ເຖິງແມ່ນວ່າພຣະອົງຊົງເປັນພຣະເຈົ້າຢ່າງຄົບຖ້ວນ ພຣະອົງກໍຊົງເປັນມະນຸດຢ່າງຄວບຖ້ວນເຫມືອນກັນ "ເຖິງປານນັ້ນພຣະອົງກໍຍັງບໍ່ມີບາບ" (ເຮັດເຣີ 4:15). ຈາກການວາຍພຣະຊົນຂອງພຣະອົງພວກເຮົາໄດ້ເຫັນຄວາມຮ້າຍກາດຂອງຄວາມບາບຂອງພວກເຮົາ. ເພື່ອໃຫ້ພາຣະກິດທີ່ພຣະເຈົ້າຊົງມອບໝາຍໃຫ້ພຣະອົງກະທຳໃຫ້ສຳເຣັດ ພວກເຮົາເຫັນການເຊື່ອຟັງຂອງພຣະອົງແລະຄວາມເມດຕາຂອງພຣະເຈົ້າ, ພຣະຄຸນ, ແລະຄວາມຮັກເພື່ອພວກເຮົາ. ເພື່ອຕອບສນອງຕາມຄວາມຮ້ອງຂໍຂອງພຣະອົງ ທະຫານໄດ້ເອົາ ເຫລົ້າແວງສົ້ມ ໃຫ້ພຣະອົງ. ໃນສມັຍນັ້ນ ເຫລົ້າແວງສົ້ມເປັນເຄື່ອງດື່ມຂອງຄົນຊັ້ນຊັ້ນຕ່ຳ. ໃຫ້ສັງເກດການເບິ່ງສັນຍາລັກອັນສຳຄັນ ໃນຂນະທີ່ຜູ້ທໍຣະມານພຣະອົງໄດ້ເອົາຟອງນ້ຳຈຸ່ມໃສ່ເຫລົ້າແວງສົ້ມແລ້ວສຽບໃສ່ ປາຍໄມ້ຫູສົບ ຍື່ນໃຫ້ພຣະອົງ. ຫລາຍສັຕວັດກ່ອນໜ້ານັ້ນ ຊາວເຮັບເຣີໄດ້ເອົາໃບໄມ້ຕົ້ນຫູສົບຈຸ່ມໃສ່ເລືອດແລ້ວເອົາມາທາຂອບປະຕູເຮືອນ (ພຣະທັມ ອົບພະຍົບ 12:22). ໃນຄືນນັ້ນແຫລະ ທູດມໍຣະນະເຂົ້າໄປເອົາຊີວິດຂອງລູກຊາຍກົກຂອງຊາວເອຢິບ. ມີແຕ່ຄອບຄົວໃດທີ່ໄດ້ຂ້າແກະແລະເລືອດທາໃສ່ຂອບປະຕູເຮືອນ ຄົນໃນຄອບຄົວນັ້ນຈຶ່ງມີຊີວິດຢູ່. ເລືອດຂອງແກະແຫ່ງປັສຄາໄດ້ປົກປ້ອງຊີວິດຂອງໄພ່ພົນຂອງພຣະເຈົ້າ. ໃນປະຈຸບັນນີ້ ເລືອດຂອງພຣະເມສານ້ອຍຂອງພຣະເຈົ້າຊົງໂຜດໄພ່ພົນຂອງພຣະເຈົ້າ ໃຫ້ພົ້ນຈາກຄວາມບາບ.

ຫລັງຈາກພຣະເຢຊູຮັບ ເຫລົ້າແວງສົ້ມ ພຣະອົງຊົງປະກາດວ່າ "ສຳເຣັດແລ້ວ." ພຣະປະສົງຂອງການສະເດັດເຂົ້າ ມາໃນໂລກນີ້ໄດ້ສຳເຣັດລົງ. ບໍ່ມີອັນໃດຍັງຄ້າງຄາຢູ່ເລີຍ ທຸກສິ່ງທຸກຢ່າງທີ່ພຣະອົງຊົງກະທຳໄປນັ້ນສົມບູນແລ້ວ. ພຣະອົງຊົງຢູ່ເທິງໄມ້ກາງແຂນຈົນກວ່າໄດ້ສະສາງຄວາມບາບຂອງມະນຸດຊາດບໍ່ວ່າໃຫຍ່ຫລືນ້ອຍຈົນໝົດສິ້ນ. ຫລັງຈາກພຣະອົງປະກາດການຊັຍຊະນະທີ່ໄດ້ສຳເຣັດໃນພາຣະກິດຂອງພຣະເຈົ້າທີ່ມອບໃຫ້ພຣະອົງ ແລະເມື່ອຊົງກົ້ມພຣະສຽນລົງ ພຣະອົງຊົງມອບຈິດວິນຍານໄວ້. ພຣະອົງຊົງຄວບຄຸມສະຖານະການຂອງພຣະອົງ ພຣະອົງຊົງຄວບຄຸມທຸກງບາດກ້າວຂອງຊີວິດຂອງພຣະອົງ. ພຣະອົງຍອມຖວາຍຊີວິດຂອງພຣະອົງເອງ ເພື່ອໃຫ້ພາຣະກິດຂອງພຣະເຈົ້າສຳເຣັດລົງຕາມພຣະປະສົງຂອງພຣະເຈົ້າ.ທ່ານມີຄວາມຮູ້ສຶກຢ່າງໃດ ເມື່ອຮູ້ວ່າພຣະເຢຊູຊົງສລະຊີວິດເພື່ອທ່ານ? ທ່ານຈະຕອບສນອງຕໍ່ການສລະຊີວິດຂອງພຣະອົງໃຫ້ເປັນເຄື່ອງບູຊາຢ່າງໃດ?

2. <u>ພຣະເຢຊູຊົງເປັນພຣະເມສາອັນສົມບູນ</u> (ໂຢຮັນ 19:31-37)

ຊາວຢິວຟ້າວຟັ່ງຢາກໃຫ້ຄົນຢູ່ເທິງໄມ້ກາງແຂນນັ້ນສິ້ນໃຈຕາຍ. ທັງນີ້ກໍເພາະເປັນວັນຈັດແຈງ ຊຶ່ງເປັນ ວັນຊະບາໂຕ, ແລະເປັນວັນຕົ້ນຂອງເທສການປັສຄາອີກດ້ວຍ. ພວກເຂົາບໍ່ຢາກໃຫ້ສົບຂອງຄົນຕາຍປະໄວ້ຄ້າງຄືນເພາະວ່າ ມັນຜິດຕໍ່ກົດພຣະບັນຍັດ ຖ້າປ່ອຍສົບຄົນຕາຍໄວ້ຈະເຮັດໃຫ້ແຜ່ນດິນຖືກສາບແຊ່ງ (ໃຫ້ເບິ່ງພຣະທັມພຣະບັນຍັດສອງ 21:23). ຝູງຊົນກຸ່ມດຽວກັນນີ້ບໍ່ຄິດເລີຍວ່າຄວາມເປັນທັມຂອງພວກເຂົາຖືກເຈືອປົນໄປແລ້ວ ເມື່ອໄດ້ທ່າພວກເຂົາກໍກ່າວໂທດໃສ່ພຣະເຢຊູແລະເອົາແຕ່ຈະເຮັດໃຫ້ພຣະອົງ. ສາສນາຂອງພວກເຂົານັ້ນສຳຄັນຕໍ່ພວກເຂົາກໍຕໍ່ເມື່ອສາສນາຂອງພວກເຂົາໃຫ້ໃນສິ່ງທີ່ພວກເຂົາຢາກໄດ້.

ມີຫລາຍຄົນໄດ້ປະຖິ້ມຄວາມຊອບທັມ ເພື່ອພວກເຂົາຈະໄດ້ໄປເຮັດໃນສິ່ງທີ່ພວກເຂົາຢາກເຮັດ. ຖ້າຫາກວ່າສາສນາໃຫ້ຄວາມຕ້ອງການກັບພວກເຂົາ ກໍບໍ່ເປັນຫຍັງ. ຖ້າຫາກວ່າສາສນາບໍ່ໃຫ້ຫຍັງ ພວກເຂົາກໍປະສາສນານັ້ນ. ຖ້າພວກເຮົາບໍ່ຣະວັງ ພວກເຮົາສາມາດແຍກພາກປະຕິບັດທາງສາສນາຈາກຊີວິດປະຈຳວັນ ວັນນັ້ນແຫລະ ພວກເຮົາໄດ້ປົດພຣະເຈົ້າລົງຈາກພຣະທີ່ນັ່ງຂອງພຣະອົງແລະພວກເຮົາກໍໄດ້ຂຶ້ນນັ່ງແທນພຣະອົງ. ອັນນີ້ແຫລະແມ່ນຄວາມບາບທີ່ເຮັດໃຫ້ພຣະເຢຊູຕ້ອງວາຍພຣະຊົນ.

ພຣະທັມຂອງພຣະເຈົ້າບໍ່ແມ່ນເອົາມາໃຊ້ເພື່ອຄວາມສະດວກ. ເຫມືອນດັ່ງໂປໂລໄດ້ແບ່ງປັນກັບຕີໂມທີວ່າ, "ພຣະຄັມພີທຸກຕອນໄດ້ຮັບການຊົງບັນດົນໃຈຈາກພຣະເຈົ້າ ແລະເປັນປໂຍດໃນການສອນ, ການຕັກເຕືອນວ່າກ່າວ, ການປັບປຸງແກ້ໄຂໃຫ້ຖືກຕ້ອງ, ແລະການອົບຮົມໃນທາງຊອບທັມ ເພື່ອຄົນຂອງພຣະເຈົ້າຈະບັນລຸຜົນສຳເຣັດ ແລະຈັດຕຽມໄວ້ພ້ອມສຳລັບການດີທຸກຢ່າງ (2ຕີໂມທີ 3:16). ພວກເຮົາຈະບັນລຸຜົນສຳເຣັດບໍ່ໄດ້ຖ້າພວກເຮົາຍັງມາ

ເລືອກເອົາແຕ່ພຣະທັມຂໍ້ທີ່ຖືກໃຈແລະຂໍ້ທີ່ບໍ່ຖືກໃຈກໍປະໄປ ຊຶ່ງເປັນອຸປກອນຂອງພຣະເຈົ້າເພື່ອນຳມາເສີມສ້າງຈິດວິນຍານຂອງພວກເຮົາ. ຄວາມສີນທັມບໍ່ແຫນ້ນແກ່ນກໍຈະນຳໄປສູ່ຄວາມຈິບຫາຍ. ເພື່ອເຮັດຕາມຄຳຮ້ອງຂໍຂອງພວກຢິວ ດັ່ງນັ້ນພວກທະຫານຈຶ່ງທຸບຂາຂອງນັກໂທດສອງຄົນທີ່ຖືກຄຶງກັບພຣະເຢຊູເມື່ອຂາຂອງພວກນັກໂທດຫັກແລ້ວ ພວກເຂົາບໍ່ສາມາດຈະຍົກຕົວເອງຂຶ້ນເພື່ອບັນເທົານ້ຳຫນັກຂອງຮ່າງກາຍຊ່ອຍແຂນແລະກ້າມເນື້ອຂອງຫນ້າອົກ ເພື່ອຊ່ອຍພວກເຂົາໃຫ້ຫາຍໃຈ. ເມື່ອເປັນດັ່ງນັ້ນ ພວກເຂົາກໍຈະໃຈຂາດໄດ້ໄວແດ່ຫນ້ອຍນຶ່ງ.

ເຖິງຢ່າງໃດກໍຕາມ ແຕ່ເມື່ອພວກເຂົາມາຮອດພຣະເຢຊູ ແລະເຫັນວ່າພຣະອົງສິ້ນພຣະຊົນແລ້ວ. ພຣະອົງຊົງສິ້ນພຣະຊົນໃນວັນຈັດແຈງ ຊຶ່ງເປັນວັນທີ່ພວກເຂົາໄດ້ຂ້າແກະນ້ອຍ ເພື່ອສລອງວັນທີ່ພຣະເຈົ້າໄດ້ຊົງປົກປ້ອງໄພ່ພົນຂອງພຣະອົງຄາວຢູ່ໃນປະເທດເອຢິບ. ອ້າງອີງຕາມພຣະຄັມພີໄດ້ບັນທຶກໄວ້ວ່າ ບໍ່ໃຫ້ນຳແກະທີ່ກະດູກຫັກແລ້ວເອົາມາຂ້າ (ຈົດເຊັນບັນຊີ 9:12). ໂຢຮັນບັບຕິສໂຕປະກາດວ່າ ພຣະເຢຊູຈະຕ້ອງເປັນຜູ້ບໍຣິສຸດ, ບໍ່ມີບ່ອນແຕກຫັກເປັນພຣະເມສາອັນສົມບູນຂອງພຣະເຈົ້າ (ໂຢຮັນ 1:29, 36) ພຣະອົງຊົງວິເສດເຫນືອໄປກວ່າແກະຂອງວັນປັສຄາ. ພຣະເຢຊູຊົງເປັນ "ພຣະເມສານ້ອຍຂອງພຣະເຈົ້າ ຜູ້ຊົງຮັບເອົາຄວາມຜິດບາບຂອງມະນຸສໂລກໄປເສັຽ" (1:29). ສ່ວນທະຫານຄົນນຶ່ງໄດ້ເອົາຫອກແທງທີ່ຂ້າງຂອງພຣະອົງ ແລະໂລຫິດກັບນ້ຳກໍໄຫລອອກທັນທີ. ການແທງທີ່ຂ້າງຂອງພຣະອົງກໍເພື່ອສະແດງໃຫ້ເຫັນວ່າພຣະອົງຊົງສິ້ນພຣະຊົນຢ່າງແນ່ນອນ.

3. <u>ພຣະເຢຊູຊົງເປັນເຄື່ອງບູຊາອັນສົມບູນ </u>(ເຮັບເຣີ 9:22-26)

ພວກປະໂລຫິດໄດ້ຊິດ ເລືອດ ໃສ່ເຄື່ອງໃຊ້ສຳລັບນະມັສການ ຮ່ວມທັງສະຖານທີ່ຕ່າງໆ ເພື່ອເປັນການຊຳຣະລ້າງ ທາງຈິດວິນຍານ (ໃຫ້ເບິ່ງພຣະທັມ ອົບພະຍົບ 29:15-21; 30:10; ເຮັບເຣີ 9:21). ການຊຳຣະລ້າງດັ່ງກ່າວນີ້ເປັນພຽງແຕ່ຊົ່ວຄາວເທົ່ານັ້ນ, ແລະຜູ້ນະມັສການລໍຄອຍວັນນັ້ນຈະໄດ້ມາເຖິງ ວັນທີ່ຈະໄດ້ຮັບການຊຳຣະເທື່ອດຽວແລະເປັນການສິ້ນສຸດ.ຜູ້ນະມັສການຊາວຢິວເຂົ້າໄປນະມັສການໃນ ສະຖານທີ່ສັກສິດ ຊຶ່ງເປັນແບບຢ່າງໃນສວັນບ່ອນສະຖິດຂອງພຣະເຈົ້າ. ມະຫາປະໂຣຫິດ ໄດ້ເຂົ້າໄປໃນ ສະຖານທີ່ສັກສິດ ທີ່ບໍ່ສົມບູນເທື່ອ ທຸກປີ ແລະນຳເລືອດຊຶ່ງບໍ່ເປັນຂອງຕົນເອງ ເຂົ້າໄປຖວາຍເພື່ອຊຳຣະບາບ. ຜູ້ຂຽນພຣະທັມເຮັບເຣີໄດ້ຮັບການດົນໃຈໃຫ້ເຕືອນພວກເຮົາໃຫ້ຮູ້ວ່າ ຖ້າບໍ່ມີເລືອດໄຫລອອກແລ້ວການໃຫ້ອະພັຍກໍບໍ່ມີ. ກົດບັນຍັດໄດ້ສອນວ່າ "ຊີວິດຂອງທຸກໆສິ່ງທີ່ເປັນຢູ່ແມ່ນຢູ່ໃນເລືອດ" ແລະສະນັ້ນຕ້ອງໃຊ້ເລືອດຂອງສັດ "ເພື່ອລຶບລ້າງການບາບທຸກຢ່າງ" ຂອງແຕ່ລະຄົນ (ລະບຽບພວກເລວີ 17:11).

ຂ້າພະເຈົ້າຮູ້ສຶກວ່າເປັນພຣະຄຸນຫລາຍທີ່ພວກເຮົາບໍ່ໄດ້ຢູ່ໃຕ້ກົດບັນຍັດເກົ່າທີ່ບໍ່ໄດ້ໃຊ້ເລືອດອີກ. ຂ້າພະເຈົ້າບໍ່ຕ້ອງການໃຫ້ເອົາເລືອດມາຊິດໃສ່ທັມມາດ ເພື່ອຈະໃຫ້ເປັນສະຖານທີ່ບໍຣິສຸດກ່ອນຈະໄປນະມັສການ . ທ່ານມີຄວາມດີໃຈບໍ່ ທີ່ທ່ານບໍ່ຕ້ອງນຳສັດມາໃນໂບດ ເພື່ອມາຂ້າເປັນເຄື່ອງຖວາຍ, ແລະບໍ່ຕ້ອງໃຫ້ສິດຍາພິບານຂອງທ່ານເອົາເລືອດຈາກສັດທີ່ທ່ານນຳມານັ້ນ ເອົາມາຊິດໃສ່ທ່ານເພື່ອທ່ານຈະເປັນຜູ້ນະມັສການທີ່ມີຄຸນຄ່າ?ພວກເຮົາສົມຄວນຈະຕາຍ, ຍ້ອນຄວາມບາບຂອງພວກເຮົາ (ໃຫ້ເບິ່ງພຣະທັມ ໂຣມ 6:23). ຄວາມບາບຂອງພວກເຮົາໄດ້ແຍກພວກເຮົາອອກຈາກພຣະເຈົ້າອົງບໍຣິສຸດ. ພຣະຄັມພີໄດ້ສອນໄວ້ຢ່າງແຈ່ມແຈ້ງວ່າ ໂທດກັມຂອງຄວາມບາບນັ້ນແມ່ນຈະຕ້ອງໄປຢູ່ໃນນະຣົກຕລອດໄປເປັນນິດ ແລະບໍ່ມີຜູ້ໃດຈະຫນີພົ້ນ ຖ້າຫາກບໍ່ໄວ້ວາງໃຈເຊື່ອໃນພຣະບຸດຂອງພຣະເຈົ້າ ເພື່ອໃຫ້ພຣະອົງເປັນຜູ້ຊົດໃຊ້ຫນີ້ສິນຄວາມບາບຂອງເຂົາ.

ປະໂຣຫິດໄດ້ຖວາຍເຄື່ອງບູຊາເພື່ອຊຳຣະລ້າງບາບຂອງປະຊາຊົນເລື້ອຍໆ ເພາະວ່າເຄື່ອງບູຊານັ້ນບໍ່ສົມບູນພໍທີ່ຈະມາທົດແທນຄວາມບາບຂອງພວກເຮົາ. ພຣະເຢຊູຊົງເປັນ ພຣະຄຣິດ ໄດ້ ສະເດັດເຂົ້າໃນມະຫາສວັນ, ຫລັງຈາກໄດ້ຖວາຍພຣະອົງເອງເປັນເຄື່ອງບູຊາເພື່ອຍົກເລີກຄວາມບາບຂອງພວກເຮົາຢ່າງຫມັ້ນຄົງ. ພຣະເຢຊູຊົງເປັນຜູ້ໄປແລກກັບຄວາມບາບຂອງພວກເຮົາ.

ຫລັງຈາກຂ້າພະເຈົ້າໄດ້ເປັນພຍານເຣື່ອງຂ່າວປະເສີດໃຫ້ຊາຍອາວຸໂສຄົນນຶ່ງຟັງ, ລາວຕອບຂ້າພະເຈົ້າ, "ບໍ່ຍຸຕິທັມດອກ." ຂ້າພະເຈົ້າຖາມລາວວ່າ, "ເຈົ້າຫມາຍຄວາມວ່າຢ່າງໃດ?" ລາວຕອບວ່າ ບໍ່ຍຸຕິທັມທີ່ພຣະເຈົ້າຕ້ອງໃຫ້

ພວກເຮົາຮັບເອົາພຣະບຸດຂອງພຣະອົງໃຫ້ເປັນພຣະຜູ້ໂຜດໃຫ້ພົ້ນຈຶ່ງຈະໄດ້ຮັບຄວາມລອດພົ້ນ. ມີຫລາຍໆຄົນ ເຫມືອນກັບຊາຍຄົນນີ້ເຊື່ອວ່າຄຣິສຕຽນເປັນຄົນມີຄວາມຄິດແຄບ ເມື່ອຄຣິສຕຽນເວົ້າວ່າຄວາມລອດພົ້ນມີແຕ່ທາງຂອງພຣະເຢຊູທາງດຽວເທົ່ານັ້ນ. ຄວາມຈິງມີຢູ່ວ່າທາງໄປສວັນນັ້ນແຄບ. ພຣະເຢຊູຊົງໄດ້ປະກາດວ່າ, "ບໍ່ມີຜູ້ໃດມາເຖິງພຣະບິດາໄດ້ນອກຈາກຈະມາທາງເຮົາ" (ໂຢຮັນ 14:6). ບອກເລົ່າໃຫ້ຄົນອື່ນຟັງໃນເຣື່ອງນີ້ ບໍ່ໄດ້ຫມາຍຄວາມວ່າພວກເຮົາເປັນຄົນມີຄວາມຄິດແຄບ. ຂ້າພະເຈົ້າບໍ່ໄດ້ເວົ້າເຖິງຄວາມຍຸຕິທັມ. ຖ້າຈະກ່າວເຖິງຄວາມຍຸຕິທັມແລ້ວ ບໍ່ມີຜູ້ໃດດອກຈະໄດ້ຮັບຄວາມລອດພົ້ນ ເພາະທຸກຄົນເປັນຄົນທີ່ປາສຈາກຄວາມຫວັງ (ໃຫ້ເບິ່ງພຣະທັມ ໂຣມ 3:23). ເພາະວ່າຄວາມບາບຂອງພວກເຮົາ ພວກເຮົາສົມຄວນໄປນະຣົກ ບໍ່ແມ່ນໄປສວັນ. ພຣະເຈົ້າຊົງປະທານພຣະບຸດອົງດຽວຂອງພຣະອົງ ເພື່ອສະເດັດມາເປັນເຄື່ອງບູຊາໄຖ່ບາບຂອງມະນຸສໂລກ ອັນນັ້ນແຫລະພຣະເຈົ້າມີຄວາມເມດຕາຕໍ່ມະນຸດຊາດ. ຜູ້ໃດວາງໃຈເຊື່ອໃນພຣະບຸດຂອງພຣະອົງວ່າເປັນພຣະຄຣິດ ຜູ້ນັ້ນກໍຈະໄດ້ຮັບຊີວິດອັນຕລອດໄປເປັນນິດ. ພຣະເຈົ້າຂອງພວກເຮົາຊົງໄດ້ກະທໍາຢ່າງນີ້ດ້ວຍຄວາມຮັກອັນຫມັ້ນຄົງຂອງພຣະອົງ.

ພຣະເຢຊູຊົງໃຊ້ຫນີ້ຄວາມບາບຂອງພວກເຮົາດ້ວຍຊີວິດຂອງພຣະອົງຢູ່ເທິງໄມ້ກາງແຂນ. ພຣະອົງຊົງຮັບຄວາມທຸກລໍາບາກເພື່ອຄວາມບາບຂອງມະນຸດທີ່ເຄີຍມີຊີວິດແລະຜູ້ທີ່ຈະມີຊີວິດຢູ່ຕໍ່ໄປ. ອ້າງອີງຕາມຄວາມຈິງຂອງພຣະເຢຊູແລ້ວ -ພຣະຊົງເປັນພຣະເມສານ້ອຍຂອງພຣະເຈົ້າ -ວາຍພຣະຊົນ (ຕາຍ) ເພື່ອຄວາມບາບຂອງພວກເຮົາພຣະອົງເທົ່ານັ້ນທີ່ສາມາດອະພັຍຄວາມບາບຂອງພວກເຮົາໄດ້. ເປັນຫຍັງພຣະເຢຊູຈຶ່ງຈໍາເປັນຈະຕ້ອງຖວາຍພຣະອົງເອງເປັນເຄື່ອງບູຊາຢູ່ເທິງໄມ້ກາງແຂນ?

- ພຣະເຈົ້າຊົງຮັກພວກເຮົາຫລາຍຈົນໄດ້ປະທານທາງອອກໃຫ້ແກ່ພວກເຮົາ ເພື່ອຄວາມບາບຂອງພວກເຮົາຈະຖືກຮື້ອອກໄປ, ໃນຂນະທີ່ພວກເຮົາບໍ່ໄດ້ເສັຽຄ່າອັນໃດໃນຄວາມລອດພົ້ນທີ່ພວກເຮົາໄດ້ຮັບນັ້ນ, ສໍາລັບພຣະເຈົ້າ ພຣະອົງສູນເສັຽຊີວິດຂອງພຣະບຸດຂອງພຣະອົງ ຄືພຣະເຢຊູ, ພຣະເມສານ້ອຍອັນສົມບູນຂອງພຣະເຈົ້າ.
- ພຣະເຢຊູຊົງໄດ້ກະທໍາພາຣະກິຈຂອງພຣະອົງທີ່ໄດ້ມອບຫມາຍໃຫ້ຈົນສໍາເຣັດໃນໂລກນີ້. ເຄື່ອງບູຊາຂອງພຣະອົງກໍສົມບູນໃນການຊົງໄຖ່ບາບທີ່ພວກເຮົາສົມຄວນໄດ້ຮັບ. ພຣະອົງຊົງແບກບາບຂອງພວກເຮົາແລະຊົງສິ້ນພຣະຊົນຢູ່ເທິງໄມ້ກາງແຂນ.
- ພຣະອົງຊົງພຣະຊົນຢູ່ໃນປະຈຸບັນນີ້ແລະພຣະອົງມີພຣະປະສົງຢາກຈະເປັນພຣະຜູ້ເປັນເຈົ້າແລະພຣະຜູ້ຊົງໂຜດໃຫ້ພົ້ນຂອງທ່ານ. ທ່ານໄດ້ຮັບເອົາພຣະອົງເຂົ້າມາໃນຊີວິດຂອງທ່ານແລ້ວຫລືຍັງ?

(ອຸປຖັມໂດຍ ລຊບສ www.lsbf.org)